**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ

ແລະ ແກ້ໄຂການລະບາດຂອງ COVID-19

ເລກທີ 3093 /ສພກ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2020

# ແຈ້ງການ ເພີ່ມເຕີມ

**ເຖິງ:** - ຄະນະສະເພາະກິດຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ຄະນະສະເພາະກິດຂອງກະຊວງກະສິກຳ ແລະ ປ່າໄມ້.
- ຄະນະສະເພາະກິດຂອງກະຊວງສາທາລະນະສຸກ.
- ຄະນະສະເພາະກິດຂອງກະຊວງການເງິນ.
- ຄະນະສະເພາະກິດຂອງກະຊວງໂຍທາທິການ ແລະ ຂົນສົ່ງ.
- ຄະນະສະເພາະກິດຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- ຄະນະສະເພາະກິດຂອງບັນດາແຂວງ, ນະຄອນຫຼວງວຽງຈັນ, ບັນດາດ່ານຊາຍແດນ ທົ່ວປະເທດ.

**ເລື່ອງ:** ເພີ່ມທະວີການກວດກາອາຫານທະເລ (ສົດ, ແຊ່ແຂງ) ທີ່ໄດ້ນຳເຂົ້າມາ ສປປ ລາວ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1414/ຫສນຍ, ລົງວັນທີ 23 ທັນວາ 2020;
- ອີງຕາມ ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 1203 /ອຄ.ສພກ, ລົງວັນທີ 24 ທັນວາ 2020;
- ອີງຕາມ ກອງປະຊຸມຂອງຄະນະວິຊາການສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງ ໂຄວິດ-19, ຄັ້ງວັນທີ 24 ທັນວາ 2020.

ເນື່ອງຈາກວ່າມີການຕິດເຊື້ອຂອງພະຍາດໂຄວິດ-19 ຈາກຕະຫຼາດສົດ ທີ່ຂາຍອາຫານທະເລ ຊຶ່ງເປັນສາເຫດເຮັດໃຫ້ມີຜູ້ຕິດເຊື້ອຈຳນວນຫຼວງຫຼາຍໃນໄລຍະ 01 ອາທິດຜ່ານມາ ແລະ ມີການແຜ່ລະບາດໄປຫຼາຍຂົງເຂດ ຢູ່ບາງປະເທດໃກ້ຄຽງ ຢ່າງວ່ອງໄວ ແລະ ພົບເຫັນມີການນຳເຂົ້າອາຫານທະເລມາຈຳໜ່າຍຢູ່ ສປປ ລາວ ທີ່ມີແຫຼ່ງມາຈາກປະເທດດັ່ງກ່າວ. ສະນັ້ນ, ເພື່ອເປັນການສະກັດກັ້ນ, ຄວບຄຸມ ແລະ ປ້ອງກັນການແຜ່ລາມຂອງພະຍາດໂຄວິດ-19 ເຂົ້າມາໃນປະເທດເຮົາ ໄດ້ຢ່າງທັນເວລາ

**ກອງເລຂາຄະນະສະເພາະກິດສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງ ໂຄວິດ-19 ອອກ ແຈ້ງການ ເພີ່ມເຕີມ:**

1. ໃຫ້ຄະນະສະເພາະກິດກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ແຕ່ງຕັ້ງທີມງານເພື່ອເຄື່ອນໄຫວອອກວຽກງານຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດແຈ້ງການຂອງຄະນະສະເພາະກິດຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1203 /ອຄ.ສພກ, ລົງວັນທີ 24 ທັນວາ 2020 ຢ່າງເຂັ້ມງວດ.

Scanned with CamScanner

2. ໃຫ້ຄະນະສະເພາະກິດກະຊວງສາທາລະນະສຸກ ລົງສຸ່ມເກັບ ແລະ ກວດຕົວຢ່າງຂອງຜູ້ປະກອບການ ພ້ອມທັງເກັບຕົວຢ່າງຂອງອາຫານທະເລສຳເລັດຮູບ ໃນ ສປປ ລາວ. ໃນກໍລະນີພົບເຫັນການປົນເປື້ອນ ແລະ ຜູ້ຕິດເຊື້ອ ໃຫ້ອານາໄມ ແລະ ຂ້າເຊື້ອ ສະຖານທີ່ດັ່ງກ່າວ.

3. ໃຫ້ຄະນະສະເພາະກິດກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ ສັງລວມເປົ້າໝາຍຜູ້ປະກອບການອາຫານທະເລ (ສົດ, ແຊ່ແຂງ) ໃນຂອບເຂດທົ່ວປະເທດ ເພື່ອວາງແຜນການລົງຕິດຕາມ ແລະ ກວດກາ.

4. ໃຫ້ຄະນະສະເພາະກິດກະຊວງກະສິກຳ ແລະ ປ່າໄມ້ ລົງສຸ່ມເກັບ ແລະ ກວດຕົວຢ່າງຂອງອາຫານທະເລ (ສົດ, ແຊ່ແຂງ) ໃນ ສປປ ລາວ.

5. ໃຫ້ຄະນະສະເພາະກິດກະຊວງໂຍທາທິການ ແລະ ຂົນສົ່ງ ອອກມາດຕະການຄວບຄຸມການຂົນສົ່ງອາຫານທະເລ (ສົດ, ແຊ່ແຂງ) ນຳເຂົ້າ ຫຼື ຜ່ານແດນ ສປປ ລາວ.

6. ໃຫ້ຄະນະສະເພາະກິດກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂຄສະນາ, ເຜີຍແຜ່ ແລະ ແຈ້ງຂໍ້ມູນທີ່ຖືກຕ້ອງ ເພື່ອບໍ່ໃຫ້ເກີດຄວາມແຕກຕື່ນໃນສັງຄົມ.

7. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຈັດຕັ້ງປະຕິບັດ ແລະ ລາຍງານຜົນການເຄື່ອນໄຫວວຽກງານ ໃຫ້ຄະນະສະເພາະກິດຊາບຢ່າງທັນການ.

8. ໃຫ້ອົງການປົກຄອງ ທຸກຂັ້ນ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງຄະນະສະເພາະກິດແຕ່ລະຂະແໜງການ.

9. ໃຫ້ທຸກກະຊວງ ແລະ ອົງການປົກຄອງ ທຸກຂັ້ນ ສະໜອງງົບປະມານໃຫ້ແກ່ຄະນະສະເພາະກິດທີ່ຂຶ້ນກັບຂະແໜງການກ່ຽວຂ້ອງ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ.

10. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີກະຊວງສາທາລະນະສຸກ**
**ຮອງຫົວໜ້າຄະນະສະເພາະກິດ**

ກະຊວງ ສາທາລະນະສຸກ
ລັດຖະມົນຕີ

**ຮສ.ດຣ.ບຸນກອງ ສີຫາວົງ**

Scanned with CamScanner